ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

------===000===------

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
628 ບ້ານ: ໂພນພະເນົາ ກມ5
ຖະໜົນ: ໄກສອນພົມວິຫານ ເມືອງ: ໄຊເສດຖາ
ນະຄອນຫຼວງວຽງຈັນ ໂທ-ແຟັກ:(+856 21)418062 – 6

ເລກທີ: 0053/21 -ມທຫຊ
ນະຄອນຫຼວງວຽງຈັນ, ວັນທີ: 10 ມີນາ 2021

ເຖິງ: ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
ທ່ານຜູ້ອຳນວຍການໃຫຍ່ຕະຫຼາດຫຼັກຊັບລາວ
ບັນດາຜູ້ຖືຮຸ້ນຂອງບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ເລື່ອງ: ແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 2/2021, ທີ່ຈະຈັດຂຶ້ນໃນວັນທີ 10 ມີນາ 2021

- ອີງຕາມ ລະບຽບວ່າດ້ວຍການລາຍງານ ແລະ ເປີດເຜີຍຂໍ້ມູນ ສະບັບເລກທີ 04/ສຄຄຊ, ລົງວັນທີ 28 ມັງກອນ 2019.
- ອີງຕາມ ລະບຽບຂອງຕະຫຼາດຫຼັກຊັບລາວວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 330/ຕລຊລ, ລົງວັນທີ 27 ກັນຍາ 2018

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (ມທຫຊ) ຂໍຖືເປັນກຽດແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 2/2021 ທີ່ຈັດຂຶ້ນໃນວັນທີ 10 ມີນາ 2021 ເຊິ່ງມີວາລະຮັບຮອງເອົາບັນຫາທີ່ສຳຄັນ ດັ່ງນີ້:

1. ຮັບຮອງຜົນການດຳເນີນງານ ແລະ ລາຍງານປະຈຳປີ 2020 ເພື່ອນຳສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອພິຈາລະນາຮັບຮອງ.
2. ຮັບຮອງເອກະສານລາຍງານການເງິນ ປະຈຳປີ 2020 ທີ່ຜ່ານການກວດສອບ ຈາກບໍລິສັດກວດສອບພາຍນອກແລ້ວ ເພື່ອນຳສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອພິຈາລະນາຮັບຮອງ.
3. ພິຈາລະນາເຫັນດີແຕ່ງຕັ້ງ **ທ່ານ ພົງສີລີ ທອງແຖມ ນະ ອາຍຸດທະຍາ** ເປັນເລຂານຸການຂອງບໍລິສັດ
4. ກຳນົດວັນທີ **26 ມີນາ 2021** ເປັນມື້ປິດປຶ້ມບັນຊີທະບຽນຜູ້ຖືຄອງຮຸ້ນຂອງບໍລິສັດ ເພື່ອກຳນົດສິດຜູ້ເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ແລະ ໄດ້ຮັບເງິນປັນຜົນ ປະຈຳປີ 2020.
5. ກຳນົດເອົາວັນທີ **27 ເມສາ 2021** ເວລາ 09:30 ໂມງ ເປັນມື້ຈັດກອງປະຊຸມສາມັນ ຜູ້ຖືຮຸ້ນ ປະຈຳປີ 2020 ແລະ ອະນຸມັດວາລະກອງປະຊຸມຜູ້ຖືຮຸ້ນ ປະຈຳປີ 2020 ໂດຍມອບໃຫ້ຜູ້ອຳນວຍການໃຫຍ່ເປັນຜູ້ກະກຽມກອງປະຊຸມດັ່ງກ່າວ.

6. ອະນຸມັດການຈ່າຍເງິນປັນຜົນ ຈາກຜົນການດຳເນີນທຸລະກິດ ປະຈຳປີ 2020 ພາຍຫຼັງຫັກເປັນຄັງສຳຮອງຕາມລະບຽບການ ແລະ ຈ່າຍສະສົມໄວ້ໃນຊຸມປີທີ່ຜ່ານມາໃຫ້ແກ່ຜູ້ຖືຮຸ້ນທີ່ມີລາຍຊື່ຢູ່ໃນບັນຊີຜູ້ຖືຮຸ້ນ ໃນວັນທີປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການຮັບເງິນປັນຜົນດັ່ງນີ:

ເງື່ອນໄຂທີ 1 ກໍລະນີຍັງບໍ່ມີການປ່ຽນແປງມູນຄ່າກຳນົດ ແມ່ນຈະຈ່າຍປັນຜົນໃນອັດຕາ 155 ກີບຕໍ່ຮຸ້ນ (ມູນຄ່າກຳນົດ 1.000 ກີບຕໍ່ຮຸ້ນ), ລວມເປັນເງິນປັນຜົນທີ່ຈະຈ່າຍທັງໝົດ 6.200.000.000 ກີບ,

ເງື່ອນໄຂທີ 2 ກໍລະນີການປ່ຽນແປງມູນຄ່າກຳນົດ ຈາກ 1.000 ກີບ ມາເປັນ 100 ກີບ ສຳເລັດ ແມ່ນຈະຈ່າຍປັນຜົນໃນອັດຕາ 15,5 ກີບຕໍ່ຮຸ້ນ (ມູນຄ່າກຳນົດ 100 ກີບຕໍ່ຮຸ້ນ) , ລວມເປັນເງິນປັນຜົນທີ່ຈະຈ່າຍທັງໝົດ 6.200.000.000 ກີບ

ແລະ ກຳນົດວັນຈ່າຍເງິນປັນຜົນໃຫ້ຜູ້ຖືຮຸ້ນພາຍໃນ 30 ວັນ ຫຼັງຈາກກອງປະຊຸມຜູ້ຖືຮຸ້ນອະນຸມັດ ໂດຍການອະນຸມັດເງິນປັນຜົນຕ້ອງສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນປະຈຳປີເພື່ອອະນຸມັດ.

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງທ່ານເພື່ອຮັບຊາບ ແລະ ເອກະສານສະບັບນີ້ໃຊ້ຕາງລາຍງານ

ສະມາຊິກສະພາບໍລິຫານ/ຜູ້ອຳນວຍການໃຫ່ຍ

(ທ່ານ ບານົບ ຕຣີລິດວິໄລ)